# ມອບເງິນຊົດເຊີຍແກ່ຜູ້ໄດ້ຮັບຜົນກະທົບຈາກໂຄງການສ້າງເຂື່ອນໄຟຟ້າຢູ່ກາສີ 1 ຕື້ກວ່າກີບ

By **ayib** - September 15, 2020




ພິທີມອບ-ຮັບເງິນຊົດເຊີຍຜົນກະທົບ ຈາກໂຄງການພັດທະນາເຂື່ອນໄຟຟ້ານ້ຳສະນາ 2 ຂອງບໍລິສັດ ນ້ຳສະນາ 2 ໄດ້ຈັດຂຶ້ນໃນຕອນເຊົ້າຂອງວັນທີ 15 ກັນຍາ 2020 ຢູ່ທີ່ຫ້ອງປະຊຸມ ຂອງຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງກາສີ ແຂວງວຽງຈັນ, ໂດຍການເຂົ້າຮ່ວມຂອງ ທ່ານ ສີທົນ ແສງພະຈັນ ເຈົ້າເມືອງໆກາສີ, ມີທ່ານ ຫຼົວເທວີນຜິງ ອຳນວຍການບໍລິສັດ ນ້ຳສະນາ 2 ພ້ອມດ້ວຍຄະນະ, ມີຫົວໜ້າຫ້ອງການ-ພະນັກງານທີ່ກ່ຽວຂ້ອງ ແລະ ພໍ່ແມ່ປະຊາຊົນ ຜູ້ທີ່ຖືກຜົນກະທົບເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດນີ້ ທ່ານ ວັນດີ ວົງພະຈັນ ຫົວໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ເມືອງກາສີ ກ່າວວ່າ: ໂຄງການພັດທະນາ ເຂື່ອນໄຟຟ້ານ້ຳສະນາ 2 ມີທີ່ຕັ້ງຢູ່ບ້ານນ້ຳພົດ ເມືອງກາສີ ແຂວງວຽງຈັນ ຫ່າງຈາກເທດສະບານ ເມືອງປະມານ 7 ກິໂລແມັດ; ບໍລິສັດ ໄດ້ເຊັນ (MOU) ກັບອຳນາດການປົກຄອງແຂວງວຽງຈັນ ໃນຄັ້ງວັນທີ 24 ພຶດສະພາ 2015 ແລະ ເຊັນສັນຍາສຳປະທານ (CA) ໃນຄັ້ງວັນທີ 6 ມີນາ 2019, ໃນໄລຍະຜ່ານມາ ທາງບໍລິສັດໄດ້ສົມທົບກັບ ວິຊາການທີ່ກ່ຽວຂ້ອງຂັ້ນແຂວງ-ຂັ້ນເມືອງ, ອຳນາດການປົກຄອງບ້ານນ້ຳພົດ ແລະ ພໍ່ແມ່ປະຊາຊົນ ລົງເກັບກຳຂໍ້ມູນຜົນກະທົບທາງດ້ານ ສິ່ງແວດລ້ອມ-ສັງຄົມ.

ພ້ອມນັ້ນ ຄະນະກຳມະການຂັ້ນແຂວງ-ຂັ້ນເມືອງ ກໍໄດ້ສົມທົບກັບ ອຳນາດການປົກຄອງບ້ານ ແລະ ປະຊາຊົນຜູ້ທີ່ຖືກຜົນກະທົບຕົວຈິງ ເພື່ອຕົກລົງເປັນເອກະພາບກັນ ທາງດ້ານຫົວໜ່ວຍລາຄາ ໃນການຊົດເຊີຍຄ່າເສຍຫາຍ ຄື: ດິນກະສິກຳທີ່ມີເອກະສານສິດນຳໃຊ້ ແມ່ນຕົກລົງກັນເອົາ 3.000 ກີບ/ຕາແມັດ, ດິນກະສິກຳທີ່ບໍ່ມີເອກະສານ ແຕ່ປະຊາຊົນຈັບຈອງ ທຳການຜະລິດ ແມ່ນຕົກລົງກັນເອົາ 2.750 ກີບ/ຕາແມັດ, ສ່ວນຜົນລະປູກປະເພດຕົ້ນໄມ້ຕ່າງໆ ແມ່ນເອກະພາບກັນເອົາຕາມຂໍ້ຕົກລົງວ່າດ້ວຍ: ການທົດແທນຜົນເສຍຫາຍແລວສາຍສົ່ງ 115 ກວ ສະຖານີບ້ານດອນ-ໂນນໄຮ ສະບັບເລກທີ 306/ພບ.ວຈ ລົງວັນທີ 26 ມີນາ 2019.

ໂຄງການພັດທະນາເຂື່ອນໄຟຟ້ານ້ຳສະນາ 2 ມີປະຊາຊົນບ້ານນ້ຳພົດ ໄດ້ຮັບຜົນກະທົບທັງໝົດ 39 ຄອບຄົວ ແລະ ດິນລວມບ້ານ 1 ຕອນ, ມີເນື້ອທີ່ທັງໝົດ 374.303 ຕາແມັດ ພ້ອມຜົນລະປູກຕົ້ນໄມ້ຈຳນວນໜຶ່ງ ລວມມູນຄ່າຊົດເຊີຍທັງໝົດ 1,4 ຕື້ກວ່າກີບ, ເຊິ່ງຈຳນວນເງິນດັ່ງກ່າວ ທາງບໍລິສັດກໍ່ໄດ້ມອບໃຫ້ປະຊາຊົນເປັນ 2 ງວດ; ງວດທີ 1 ໄດ້ມອບໃນຄັ້ງວັນທີ 8 ກໍລະກົດ 2020 ຈຳນວນເງິນ 725 ລ້ານກວ່າກີບ ແລະ ຄັ້ງຫຼ້າສຸດກໍ່ແມ່ນວັນທີ 15 ກັນຍາ 2020 ນີ້.

ຂໍ້ມູນຈາກ: medialaos

## EDITOR PICKS

ຊີ້ແຈງ ຕໍ່ປະກົດການຂອງນາຍຫນ້ານາຍືມລຽນແຖວແລະຮຽກເກັບເງິນປະຊາຊົນ ຕໍ່ຫນ້າກົມກົງສຸນ

July 15, 2022

ກະຊວງພະລັງງານ ແລະ ບໍ່ແຮ່ ຮ່ວມກັບ ຄາບອນທັຣດຮ່ວມມືກັນໂຄສະນາເຜີຍແຜ່ ເພື່ອສົ່ງເສີມການປະຢັດ ແລະ ນຳໃຊ້ພະລັງງານຢ່າງມີປະສິດທິພາບໃນ ສປປ ລາວ

July 15, 2022

ຮຽກຮ້ອງສັງຄົມຢ່າຫຼົງເຊື່ອ ການຊັກຊວນໄປເຮັດວຽກຢູ່ ສ.ເກົາຫຼີ

July 15, 2022

## ຄວາມສົນໃຈ

ຊີ້ແຈງ ຕໍ່ປະກົດການຂອງນາຍຫນ້ານາຍືມລຽນແຖວແລະຮຽກເກັບເງິນປະຊາຊົນ ຕໍ່ຫນ້າກົມກົງສຸນ

July 15, 2022

ກະຊວງພະລັງງານ ແລະ ບໍ່ແຮ່ ຮ່ວມກັບ ຄາບອນທັຣດຮ່ວມມືກັນໂຄສະນາເຜີຍແຜ່ ເພື່ອສົ່ງເສີມການປະຢັດ ແລະ ນຳໃຊ້ພະລັງງານຢ່າງມີປະສິດທິພາບໃນ ສປປ ລາວ

July 15, 2022